# ALITOFATIB

**Generic name:** Tofacitinib citrate tablets
**Brand Name:** ALITOFATIB
**Composition:**
Tofacitinib........................................................5mg
**Indications:**

- Adult patients with moderate to severely active rheumatoid arthritis who have had an inadequate response or intolerance to methotrexate.
- Adult patients with active psoriatic arthritis who have had an inadequate response to methotrexate or other disease-modifying antirheumatic drugs.
- Adult patients with ankylosing spondylitis when other treatments are ineffective or poorly tolerated.
- Adult patients with moderately to severely active ulcerative colitis.

**Dosage:**

- Recommended dosage in rheumatoid arthritis, psoriatic arthritis, and ankylosing spondylitis: 5 mg twice daily.
- Recommended dosage in ulcerative colitis: 10 mg twice daily.

**Contraindications:**

- None.

**Warnings:**

- Serious Infections: Avoid use of ALITOFATIB during an active serious infection, including localized infections.
- Gastrointestinal Perforations: Use with caution in patients that may be at increased risk.
- Immunizations: Live vaccines: Avoid use with ALITOFATIB.
- Use of ALITOFATIB in patients with severe hepatic impairment is not recommended.
- Pregnant and lactating women should use with caution.

**Adverse Effects:**

- Upper respiratory tract infection, nasopharyngitis, diarrhea, headache, elevated cholesterol levels, headache, increased blood creatine phosphokinase, rash, and herpes zoster.

**Dosage form:** White tablets.
**Packaging:** 30 tablets/bottle.
**Expiry date:** 36 months from the date of manufacture.
**Storage:**

- Store at room temperature not exceeding 30℃.
- Please place it out of reach of children.

**Manufactured by:**
Laos Alliance Pharmaceutical Group Factory
Saysettha Development Zone, Vientiane Capital, Lao PDR
Tel: +856-21-737 051
www.alliancepharmagroup.com

# ເອກະສານກຳກັບຢາ
# ALITOFATIB

**ຊື່ທົ່ວໄປ:** Tofacitinib citrate
**ຊື່ການຄ້າ:** ALITOFATIB
**ສ່ວນປະກອບ:**
Tofacitinib.............................................................................5 mg
**ຂໍ້ບົ່ງໃຊ້:**
- ໃຊ້ປິ່ນປົວພະຍາດປະດົງຂໍ່ອັກເສບ, ໃນຜູ້ໃຫຍ່ ທີ່ມີອາການຂອງພະຍາດໃນລະດັບປານກາງ ຫາຮຸນແຮງ, ເຊິ່ງໃນໄລຍະຜ່ານມາມີການນຳໃຊ້ຢາ methotrexate ມີການຕອບສະໜອງບໍ່ພຽງພໍ ຫຼື ມີການດື້ຕໍ່ຢາ methotrexate.
- ໃຊ້ປິ່ນປົວພະຍາດຂໍ່ອັກເສບ ໃນຜູ້ໃຫຍ່ ທີ່ມີສາເຫດມາຈາກພະຍາດຜິວໜັງທີ່ມີລັກສະນະເປັນແຜ່ນໜາບວມໃຄ່ ຫຼື ເອີ້ນວ່າ ສະເກັດເງິນ ເຊິ່ງໃນໄລຍະຜ່ານມາມີການນຳໃຊ້ຢາ methotrexate ມີການຕອບສະໜອງບໍ່ພຽງພໍ ຫຼື ມີການນຳໃຊ້ຢາປິ່ນປົວພະຍາດປະດົງຂໍ່ຊະນິດອື່ນໆ ທີ່ສາມາດເຮັດໃຫ້ມີການປ່ຽນແປງອາການຂອງພະຍາດໄດ້.
- ໃຊ້ປິ່ນປົວພະຍາດຂໍ່ກະດູກສັນຫຼັງອັກເສບ ທີ່ມີລັກສະນະຂອງຂໍ່ຕິດກັນ, ເຊິ່ງໃນໄລຍະຜ່ານມາມີການນຳໃຊ້ຢາອື່ນໆໃນການປິ່ນປົວ ແຕ່ບໍ່ໄດ້ຜົນ ຫຼື ຄົນເຈັບບໍ່ສາມາດທົນຕໍ່ລິດຢາໄດ້.
- ໃຊ້ປິ່ນປົວພະຍາດລຳໄສ້ໃຫຍ່ອັກເສບ ໃນຜູ້ໃຫຍ່ ທີ່ມີແຜອັກເສບໃນລະດັບປານກາງ ຈົນເຖິງຂັ້ນຮຸນແຮງ.

**ວິທີໃຊ້:**
- ປະລິມານທີ່ແນະນຳສຳລັບພະຍາດປະດົງຂໍ່ອັກເສບ, ພະຍາດຂໍ້ອັກເສບທີ່ມາຈາກສະເກັດເງິນ ແລະ ພະຍາດຂໍ່ກະດູກສັນຫຼັງອັກເສບ ທີ່ມີລັກສະນະຂໍ່ຕິດກັນ ແມ່ນໃຊ້ດ້ວຍປະລິມານ 5 mg, 2 ເທື່ອຕໍ່ມື້.
- ປະລິມານທີ່ແນະນຳສຳລັບພະຍາດລຳໄສ້ໃຫຍ່ເປັນແຜອັກເສບ ແມ່ນໃຊ້ດ້ວຍປະລິມານ 10 mg, 2 ເທື່ອຕໍ່ມື້.

**ຂໍ້ຫ້າມໃຊ້:**
- ຍັງບໍ່ທັນມີຂໍ້ມູນ

**ຄຳເຕືອນ:**
- ການຕິດເຊື້ອຮ້າຍແຮງ: ໃຫ້ຫຼີກລ່ຽງການນຳໃຊ້ຢາ ALITOFATIB ໃນໄລຍະທີ່ມີການຕິດເຊື້ອຮ້າຍແຮງລວມທັງການຕິດເຊື້ອສະເພາະທີ່ໃດໜຶ່ງ.
- ໃນກໍລະນີມີການເຈາະ, ຜ່າຕັດ ລະບົບທາງເດີນອາຫານ: ໃຫ້ນຳໃຊ້ດ້ວຍຄວາມລະມັດລະວັງ, ເນື່ອງຈາກວ່າຈະເຮັດໃຫ້ຄົນເຈັບມີຄວາມສ່ຽງໃນການຕິດເຊື້ອເພີ່ມຂຶ້ນ.
- ການສັກວັກຊີນ: ໃນກໍລະນີທີ່ມີການສັກວັກຊີນຊະນິດທີ່ຈັດໃນກຸ່ມຂອງເຊື້ອເປັນ, ຫຼີກລ້ຽງໃນການນຳໃຊ້ຮ່ວມກັບ ALITOFATIB.
- ບໍ່ແນະນຳໃຫ້ມີການນຳໃຊ້ ALITOFATIB ໃນຄົນເຈັບ ທີ່ມີໜ້າທີ່ການທຳງານຂອງຕັບຊຸດໂຊມຢ່າງຮຸນແຮງ.
- ແມ່ຍິງຖືພາ ແລະ ຢູ່ໃນໄລຍະທີ່ໃຫ້ນົມລູກ ແມ່ນໃຫ້ນຳໃຊ້ດ້ວຍຄວາມລະມັດລະວັງ.

**ຜົນຂ້າງຄຽງ:**
- ມີການຕິດເຊື້ອໃນລະບົບທາງເດີນຫາຍໃຈສ່ວນເທິງ (Upper respiratory tract infection), ພະຍາດໂພ້ງດັງອັກເສບ, ຖອກທ້ອງ, ເຈັບຫົວ, ລະດັບໄຂມັນໃນເລືອດສູງ, ເປັນຜື່ນຕາມຜິວໜັງ ແລະ ເປັນຫູດແຜ່ນໜາ (herpes zoster)

**ຮູບແບບຂອງຢາ:** ຢາເມັດສີຂາວ.
**ຂະໜາດບັນຈຸ:** ບັນຈຸໃນກ່ອງ, 1 ກ່ອງມີ 30 ເມັດ.
**ວັນໝົດອາຍຸ:** 36 ເດືອນນັບຫຼັງຈາກວັນທີຜະລິດ.
**ການເກັບຮັກສາ:**
- ເກັບຮັກສາໄວ້ໃນກ່ອງບັນຈຸເດີມ, ປິດຝາສະໜິດ, ເກັບຮັກສາໄວ້ໃນອຸນຫະພູມຕໍ່າກວ່າ 30°C.
- ເກັບຮັກສາໄວ້ໃຫ້ຫ່າງໄກຈາກມືເດັກ.

**ຜະລິດໂດຍ:**
ໂຮງງານຜະລິດຢາ ລາວພັນທະມິດ ຟາກມາ ກຣຸບ ຈຳກັດ
ສະຖານທີ່: ຕັ້ງຢູ່ເຂດ ພັດທະນາກວມລວມ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ
ໂທລະສັບ: +856-21-737 051
www.alliancepharmagroup.com